ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງສປປ ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 630/ກຄທ

ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2023

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ,

**ເລື່ອງ:** ການຈັດຕັ້ງປະຕິບັດມາດຕາ 19 ຂອງຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາ ສະບັບເລກທີ 1026/ທຫລ, ລົງວັນທີ 28 ທັນວາ 2022.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາ ສະບັບເລກທີ 1026/ທຫລ, ລົງວັນທີ 28 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 07 ພະຈິກ 2013.

ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປ ລາວ ຂໍແຈ້ງມາຍັງທ່ານ ເພື່ອໃຫ້ຈັດຕັ້ງປະຕິບັດມາດຕາ 19 ຂອງຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາ ສະບັບເລກທີ 1026/ທຫລ, ລົງວັນທີ 28 ທັນວາ 2022 ດັ່ງນີ້:

1. ທະນາຄານທຸລະກິດ ມີໜ້າທີ່ປະຕິບັດວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ໂດຍກົງ ແລະ ບໍ່ຈຳເປັນລາຍງານໃຫ້ກົມຄຸ້ມຄອງທະນາຄານທຸລະກິດ;

3. ທະນາຄານທຸລະກິດ ມີໜ້າທີ່ກຳນົດຫຼັກການ ແລະ ລະບຽບການກ່ຽວກັບວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອໃຫ້ໜ່ວຍແລກປ່ຽນເງິນຕາຂອງຕົນຈັດຕັ້ງປະຕິບັດ ພ້ອມທັງຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ດ້ວຍຄວາມຮັບຜິດຊອບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າກົມ**

ອາລຸນ ບຸນຍົງ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la